ແຜນການສອນ

ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 19 ສິງຫາ 2007 ( 08-19-2007 )

# ໃນເມື່ອມີການເຈັບປ່ວຍເກີດຂື້ນ:

**ຂໍ້ພຣະຄັມພີໃນບົດຮຽນ:** 2 ກະສັດ 5:1-5, 8-16 ( ປະຫວັດກະສັດທີສອງ. ໃນປື້ມປົກສີດໍາ )

**ຄໍາຖາມແຫ່ງຊີວິດ:** ຂ້າພະເຈົ້າຈະຮູ້ໄດ້ຢ່າງໃດວ່າພຣະເຈົ້າເປັນຫ່ວງໃຍໃນເມື່ອຂ້າພະເຈົ້າມີການເຈັບໄຂ້?

**ພຣະຄັມພີແຫ່ງຄວາມຈິງ:** ພຣະເຈົ້າຍິ່ງໃຫຍ່ກວ່າການເຈັບໄຂ້ ແລະພຣະອົງຊົງເມດຕາສົງສານຕໍ່ຜູ້ທີ່ຖ່ອມໃຈ ເຊື່ອຟັງພຣະອົງ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ຂຽນຂື້ນມາເພື່ອຊ່ອຍທ່ານໃຫ້ສແວງຫາຄວາມຊ່ອຍເຫລືອຈາກພຣະເຈົ້າໃນເມື່ອ ປະສົບກັບສະພາບການອັນໜັກໜ່ວງໂດຍ:

- ເຊື່ອວ່າພຣະເຈົ້າມີພຣະຄຸນພິສສໍາລັບຜູ້ຍອມຖ່ອມໃຈລົງເຊື່ອຟັງພຣະອົງ ແລະ
- ແລະຫັນເຂົ້າຫາພຣະເຈົ້າໂດຍໄວ້ວາງໃຈດ້ວຍຄວາມອ່ອນນ້ອມ.

## ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນໍາຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນໍາໄປສອນ
4. ອ່ານ "**ແຜນການສອນ**" , ໝາຍບ່ອນສໍາຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສໍາເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈໍານວນນັກຮຽນ

## ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສໍາຣວດຈໍານວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈໍາ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄໍາພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**ແນະນໍາ:** -ໃນເມື່ອຊີວິດຕົກຕໍ່າໃຫ້ຫລຽວມອງຂື້ນເບິ່ງເບື້ອງເທິງສເມີ. (ທູນຕໍ່ພຣະເຈົ້າ)

**ຄໍາຖາມ:**

1. ພຣະເຈົ້າໄດ້ຊົງຊ່ອຍ ຫລືເວົ້າກັບທ່ານຢ່າງໃດໃນເວລາຄົນຮັກຂອງທ່ານຢູ່ໃນຄວາມເຈັບໄຂ້?
2. ທ່ານ ຫລືຄົນທີ່ທ່ານຮັກປະສົບກັບການເຈັບໄຂ້ຢ່າງຮ້າຍແຮງທ່ານຈະບໍ່ເອົາໃຈໃສ່ປິ່ນປົວບໍ?
3. ຖ້າເປັນຢ່າງນັ້ນທ່ານຈະເຮັດຢ່າງໃດ?
4. ພຣະເຈົ້າເດພຣະອົງໄດ້ຊົງຕອບສນອງຢ່າງໃດ?

## 1. ຄວາມເຈັບໄຂ້ສາມາດເກີດຂຶ້ນກັບທຸກ ໆ ຄົນ: 2 ກະສັດ 5:1-5 (ປະຫວັດກະສັດທີສອງ)

1) ຂໍໃຫ້ນັກຮຽນອາສາສມັກອ່ານ 2 ກະສັດ 5:1-5

2) **ອະທິບາຍ:** - ໃຫ້ຮູ້ວ່າຄວາມເຈັບໄຂ້ນັ້ນມີອະຄະຕິຕໍ່ຄວາມຮູ້ສຶກ ແລະສຸຂພາບຮ່າງກາຍ. ພ້ອມທັງທຳຮ້າຍໄດ້ທຸກຄົນໂດຍບໍ່ໄດ້ຍົກເວັ້ນຜູ້ໃດ, ບາງຄັ້ງປິ່ນປົວກໍບໍ່ຫາຍຂາດ ແລະກໍຢູ່ນຳຕລອດຊີວິດຂອງເຂົາ. ດັ່ງບັນຫາຂອງ **ນາອາມານ** ຊຶ່ງເປັນຜູ້ບັນຊາການທະຫານນັ້ນ.

3) **ຖາມວ່າ:** ເປັນດ້ວຍເຫດໃດ ນາອາມານຈຶ່ງເປັນຄົນສຳຄັນ ແລະເປັນຜູ້ໄດ້ຮັບກຽດອັນສູງສົ່ງຈາກເຈົ້າຊີວິດ?
- ຖ້າສລຸບຕາມ 1 ກະສັດ 5:1-5 ແລ້ວເຮົາກໍຈະໄດ້ລາຍລະອຽດ: ( 1 ) ເຈົ້າຊີວິດອາຣາມໄດ້ອ້ອນວອນຂໍຮ້ອງມາກ່ອນແລ້ວ. ( 2 ) ຄົນໃຊ້ໃນເຮືອນຂອງ ນາອາມານ ຊຶ່ງເປັນຜູ້ຍິງຊາວອິສຣາເອນ ໄດ້ບອກເມັຽເພິ່ນວ່າຜູ້ປະກາດພຣະທັມຄົນອິສຣາເອນສາມາດປິ່ນປົວພຍາດຂີ້ທູດຂອງນາອາມານໄດ້. ( 3 ) ເຈົ້າຊີວິດໄດ້ຈັດຕຽມທຸກຢ່າງໃນການເດີນທາງໄປປິ່ນປົວຂອງນາອາມານໃຫ້ປອດພັຍ ໃຫ້ໄດ້ຮັບການປິ່ນປົວ. ( 4 ) ເຈົ້າຊີວິດອາຣາມ ສົ່ງນາອາມານໄປຫາເຈົ້າຊີວິດອິສຣາເອນພ້ອມທັງເງິນ, ເຄື່ອງນຸ່ງຫລາຍຊຸດ ແລະພ້ອມທັງຈົດໝາຍຂໍອະນຸຍາດໃຫ້ນາອາມານໄດ້ຮັບປິ່ນປົວ.

4) **ອະທິບາຍ:** ເຖິງແມ່ນການເຈັບປ່ວຍສາມາເກີດຂຶ້ນໄດ້ກັບທຸກຄົນ ແລະກໍບໍ່ແມ່ນປົວໄດ້ໝົດທຸກຄົນ, ການມີສາຍສັມ ພັນກັບພຣະຄຣິດໂດຍສ່ວນຕົວກໍບໍ່ມີຄວາມແນ່ໃຈວ່າຈະມີສຸຂພາບດີ ຫລືໄດ້ຮັບການປິ່ນປົວໄດ້, ບາງທີພຣະເຈົ້າກໍຈະຊົງໃຊ້ທ່ານໃຫ້ມີໜ້າທີ່ປິ່ນປົວຄົນໄຂ້ໄດ້,

5) ເພື່ອຄວາມແນ່ນອນ, ໃຫ້ນັກຮຽນທຸກຄົນເຂົ້າໃຈວ່າ: ພຣະເຈົ້າບໍ່ໄດ້ປິ່ນປົວໝົດທຸກຄົນ. ບາງເທື່ອພຣະອົງກໍຊົງປິ່ນປົວຄຣິສຕຽນທັງຄົນບໍ່ເປັນຄຣິສຕຽນຄືກັນ ເຊັ່ນພຣະອົງໄດ້ຊົງປິ່ນປົວ ນາອາມານນັ້ນ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** 2 ກະສັດ 5:1-5 ( ປະຫວັດກະສັດທີສອງ )

1. ຄຣິສຕຽນໄດ້ຮັບການປິ່ນປົວຈາກຊີວິດທີ່ຖືກລຸກລາມທຸກຄັ້ງຢູ່ບໍ່?
2. ຄຣິສຕຽນສົມຄວນຊອກຫາການປິ່ນປົວຈາກພຣະເຈົ້າບໍ່? ເປັນຫຍັງ? ເປັນຫຍັງບໍ່?
3. ທຸກມື້ນີ້ພຣະເຈົ້າໄດ້ຊົງປິ່ນປົວມະນຸດດ້ວຍທາງໃດ, ໂດຍວິທີໃດ?

## 2. ຫົນທາງຂອງພຣະເຈົ້າບໍ່ສາມາດເຂົ້າໃຈໄດ້ໝົດ: (2 ກະສັດ5:8-12 ( ປະຫວັດກະສັດທີສອງ )

1) ຂໍໃຫ້ອາສາສມັກອ່ານພຣະທັມ 2 ກະສັດ 5:8-12

2) **ຄຳຖາມ:** (1) ທ່ານເຊື່ອວ່າ ນາອາມານຕື່ນເຕັ້ນ ດີໃຈກັບວິທີທາງທີ່ພຣະເຈົ້າປິ່ນປົວພຍາດຂອງລາວບໍ່? ເປັນຫຍັງ? ເປັນຫຍັງບໍ່? (2) ທຳອິດທ່ານຄິດເຣື່ອງການປິ່ນປົວຄົນເຈັບເປັນຂອງພຣະເຈົ້າແນວໃດແດ່? (3) ການປິ່ນປົວດ້ວຍການວາງມືອະທິຖານ, ທາງການອັສຈັນ, ທາງຫວ້ານຢາ ແລະມີທາງໃດອີກແດ່ (4) ທ່ານເຊື່ອວ່າພຣະເຈົ້າປິ່ນປົວຄົນຕາມລາຍໄດ້ຂອງເຂົາບໍ່? ເປັນຫຍັງ ຫລືເປັນຫຍັງບໍ່ແມ່ນ? (5) ທ່ານຄິດວ່າພຣະເຈົ້າໃຫ້ຄົນໄຂ້ທີ່ໄດ້ຮັບການປິ່ນປົວສັຣເສີນພຣະອົງຢູ່ບໍ່?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** 2 ກະສັດ 5:8-12

1. ເປັນດ້ວຍເຫດໃດພຣະເຈົ້າຈຶ່ງປິ່ນປົວບາງຄົນ ແລະບໍ່ປິ່ນປົວບາງຄົນ?
2. ທ່ານຈະສັຣເສີນພຣະເຈົ້າຢ່າງໃດແດ່ໃນຊີວິດຂອງທ່ານເຣື່ອງການຊົງປິ່ນປົວຄົນເຈັບໄຂ້ໄດ້ພຍາດທັ້ງ ໆ ທີ່ພຣະອົງບໍ່ໄດ້ຊົງປິ່ນປົວທ່ານ?

**3. <u>ພຣະຄຸນຂອງພຣະເຈົ້າມີສຳລັບພວກເຮົາ:</u>**       2 ກະສັດ 5:13-16 ( ປະຫວັດກະສັດທີສອງ )

1) ຂໍໃຫ້ນັກຮຽນອາສາສມັກອ່ານ   2 ກະສັດ 5:13-16

2) **ອະທິບາຍ:**  ພຣະເຈົ້າໄດ້ຊົງສຳແດງພຣະຄຸນຂອງພຣະອົງໃຫ້ນາອາມານເຫັນດ້ວຍການປິ່ນປົວພຍາດທີ່ຮ້າຍແຮງຂອງລາວໂດຍຜ່ານທາງຜູ້ປະກາດພຣະທັມ ເອລີຊາ.

3) ກຳລັງຂອງບັນດາຜູ້ທີ່ເຊື່ອມີຂອບເຂດຈຳກັດ ແລະທີ່ນທາງກໍແຄບ, ແຕ່ພລັງອຳນາດຂອງພຣະເຈົ້ານັ້ນຍິ່ງໃຫຍ່ບໍ່ມີຂອບເຂດຈຳກັດ. ພຣະອົງສາມາດໃຊ້ທີ່ໃດ, ຄົນໃດ,ຕຳແໜ່ງໃດແລະສະຖານທີ່ໃດເພື່ອຊ່ອຍພວກເຮົາໃນເວລາພວກເຮົາພົບກັບການບໍ່ສະບາຍນັ້ນ. ບໍ່ມີຄວາມເຈັບປວດໃດ ໆ ເຂົ້າໃກ້ພຣະອົງໄດ້ ແລະບໍ່ມີພຍາດອັນໃດທີ່ພຣະອົງກຳຈັດບໍ່ໄດ້.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ**     2 ກະສັດ 5:13-16

1. ເຮັດແນວໃດທ່ານຈຶ່ງຈະໃຫ້ຜູ້ທີ່ເຮັດໃຫ້ທ່ານເຈັບປວດໄດ້ຮັບພຣະຄຸນຂອງພຣະເຈົ້າເປັນຂອງຂວັນອັນຍຸຕິທັມ?
2. ພຣະເຈົ້າໄດ້ໃຫ້ຄວາມແຂງແຮງ ແລະໜູນຈິດໜູນໃຈທ່ານໃນການເຮັດທຸກສິ່ງຢ່າງທີ່ພຣະອົງຊົງໃຫ້ທ່ານເຮັດນັ້ນ ຫລືບໍ່?

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ</u>

- ບໍ່ມີຜູ້ໃດສາມາດຫລີກເວັ້ນການເຈັບໄຂ້ໄດ້ ທັ້ງ ໆ ຄຣິສຕຽນທີ່ມີຄວາມເຊື່ອທີ່ເຂັ້ມແຂງທີ່ສຸດກໍຕ້ານບໍ່ໄດ້.
- ພຣະເຈົ້າຈະເປັນຜູ້ດູແລຮັກສາການເຈັບເປັນຂອງພວກເຮົາ. ບາງເທື່ອກໍເປັນເຣື່ອງສງົບສົນເທສຳລັບພວກເຮົາ, ແຕ່ວ່າພວກເຮົາຕ້ອງອ່ອນນ້ອມຖ່ອມໃຈຢືນໝັ້ນຢູ່ດ້ວຍຄວາມເຊື່ອ.
- ພຣະເຈົ້າໄດ້ມີພຣະຄຸນໃຫ້ສຳລັບທຸກ ໆ ຄົນທີ່ເຊື່ອໄວ້ວາງໃຈໃນພຣະອົງ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org.  by JH